# "ຜູ້ນຳທ່ຽວຊົມນົກ" ຂອງແຂວງຢຸນນານ

ວັນທີ 15 ສິງຫານີ້, ເປັນວັນຄົບຮອບ 2 ປີຂອງວັນນິເວດທົ່ວປະເທດຈີນ. ແຂວງຢຸນນານ ຖືກເອີ້ນວ່າເປັນ "ອານາຈັກສັດ" ແລະ "ອານາຈັກພືດ" ຂອງຈີນ, ເປັນໜຶ່ງໃນເຂດແຂວງທີ່ມີສັດ ແລະ ພືດຫຼາຍທີ່ສຸດຂອງຈີນ, ພ້ອມທັງມີຊັບພະຍາກອນນົກທີ່ມີຊື່ສຽງໃນທົ່ວປະເທດຈີນ. ຄຽງຄູ່ກັບສິ່ງແວດລ້ອມນິເວດຂອງແຂວງຢຸນນານ ໄດ້ຮັບການປົກປັກຮັກສາແລະຟື້ນຟູຄືນເປັນຢ່າງດີ. ແຂວງຢຸນນານໄດ້ດຶງດູດນົກປະເພດຕ່າງໆມາພັກເຊົາຢູ່ນັບມື້ນັບຫຼາຍຂຶ້ນຊຶ່ງໄດ້ຊຸກຍູ້ການທ່ອງທ່ຽວທາງລະບົບນິເວດຂອງແຂວງຢຸນນານ.

ໃນລາຍການພາກນີ້, ພວກເຮົາຈະພາທ່ານໄປທ່ຽວຊົມພູກ່າວຫຼີກົງຊານ ແລະ ພູຫຼາວຈຸ່ນຊານ ຂອງແຂວງຢຸນນານ, ຟັງ "ຜູ້ນຳທ່ຽວຊົມນົກ" ຂອງທ້ອງຖິ່ນນັ້ນ ເລົ່າເລື່ອງກ່ຽວກັບການປົກປັກຮັກສາພູຂຽວນ້ຳໃສ, ຄົນ ແລະ ທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນຂອງທ້ອງຖິ່ນນັ້ນ.





## ພໍ່ຕາກັບລູກເຂີຍເປັນ "ຜູ້ນຳທ່ຽວຊົມນົກ" ເຊັ່ນດຽວກັນ

ບ້ານປາຍຮວາລີງ ນະຄອນປາວຊານ ແຂວງຢຸນນານ ທີ່ຕັ້ງຢູ່ທາງພາກຕາເວັນອອກຂອງພູກ່າວຫຼີກົງຊານ ມີຊັບພະຍາກອນນົກທີ່ອຸດົມສົມບູນ. ມາຮອດປັດຈຸບັນ, ເຂດບ້ານປາຍຮວາລີງ ໄດ້ມີນົກຫຼາຍກວ່າ 340 ຊະນິດ ຖືກບັນທຶກໄວ້ໃນປື້ມບັນຊີນົກ ຊຶ່ງໄດ້ດຶງດູດຜູ້ມັກຊົມນົກ ທັງພາຍໃນ ແລະ ຕ່າງປະເທດ ມາທ່ຽວຊົມນົກ ແລະ ຖ່າຍຮູບນົກຢູ່ບ້ານນີ້ຕະຫຼອດປີ.

ຢູ່ບ້ານປາຍຮວາລີງ, ເມື່ອເວົ້າເຖິງພໍ່ຕາ ໂຫຖີໂກ ແລະ ທ່ານ ເກີປາວຈີ ທີ່ເປັນລູກເຂີຍ, ໝົດທຸກຄົນຈະຍົກນິ້ວໂປ້ສະແດງຄວາມຍ້ອງຍໍຊົມເຊີຍ: "ພໍ່ຕາໂຫຖີໂກເປັນ "ຜູ້ນຳທ່ຽວຊົມນົກ" ຜູ້ທຳອິດຂອງບ້ານເຮົາ, ເພິ່ນຮູ້ຈັກນົກຮ້ອຍກວ່າຊະນິດ ເກັ່ງອີ່ຫຼີ!" "ທ່ານ ເກີປາວຈີ້ ຜູ້ເປັນລູກເຂີຍ ຂອງພໍ່ຕາ ໂຫຖີໂກ ກໍຄືກັນ, ເມື່ອຮອດຍາມພັກຮຽນ, ຈະພາເດັກນ້ອຍທີ່ມາຈາກແຫ່ງຕ່າງໆໃນທົ່ວປະເທດ ເຂົ້າໄປຄົ້ນຄວ້ານົກໃນປ່າ."

ປີ 1989, ທ່ານ ໂຫຖີໂກ ໄດ້ຕ້ອນຮັບຄູ່ຜົວເມຍທີ່ມາຈາກເຂດໄຕ້ຫວັນ ຈີນ ທີ່ມາຊົມນົກ, ເລີຍກາຍເປັນ "ຜູ້ນຳທ່ຽວຊົມນົກ" ຜູ້ທຳອິດໃນບ້ານ. ຍ້ອນວ່າ ທ່ານຮູ້ດີຕໍ່ສະພາບພູມສັນຖານ ແລະ ຮູ້ນິດໄສຂອງນົກ, ທ່ານ ໂຫຖີໂກ ກໍເລີຍກາຍເປັນຜູ້ທີ່ມີຊື່ສຽງໃນວົງການຊົມນົກ ຊຶ່ງໄດ້ນຳພາບ້ານປາຍຮວາລີງ ພັດທະນາເສດຖະກິດ ຊົມນົກ ແລະ ນຳພາຊາວບ້ານທັງຫຼາຍ ກາຍເປັນຜູ້ປົກປ້ອງນົກ.

ໃນໄລຍະທີ່ເປັນ "ຜູ້ນຳທ່ຽວຊົມນົກ", ທ່ານ ໂຫຖີໂກ ຮັບຮູ້ເຖິງຄວາມສຳຄັນໃນການປົກປ້ອງຊີວະນາໆພັນ. ທ່ານກ່າວວ່າ: "ພວກເຮົາປົກປ້ອງປ່າໄມ້ໄດ້ດີແລ້ວ, ນົກກໍຈະຫຼາຍຂຶ້ນ ແລະ ນັກທ່ອງທ່ຽວທີ່ມາຊົມນົກກໍຫຼາຍຂຶ້ນເຊັ່ນດຽວກັນ".

ປີ 1995, ບ້ານປາຍຮວາລີງ ໄດ້ສ້າງຕັ້ງສະມາຄົມປົກປ້ອງຊີວະນາໆພັນຊາວນາແຫ່ງທຳອິດຂອງຈີນ, ທ່ານ ໂຫຖີໂກ ເວົ້າດ້ວຍຄວາມພາກພູມໃຈວ່າ: "ປັດຈຸບັນ, ພວກເຮົາໄດ້ຈາກ "ຜູ້ເພິ່ງພາອາໄສແຕ່ພູ" ກາຍມາເປັນ "ຄົນ ແລະ ທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນ."

ທ່ານ ເກີປາວຈີ້ ທີ່ເປັນຜູ້ນຳທ່ຽວຊົມນົກ ເກີດຫຼັງປີ 1990 ເປັນຜົວຂອງລູກສາວຜູ້ທີສອງຂອງ ທ່ານ ໂຫຖີໂກ, ປີ 2015 ທ່ານ ໄດ້ລາອອກຈາກຕຳແໜ່ງງານໃນເມືອງ, ມາດຳລົງຊີວິດຢູ່ບ້ານປາຍຮວາລີງ ກັບເມຍ ເພື່ອຮຽນຄວາມຮູ້ການຊົມນົກກັບພໍ່ຕາ. ທ່ານ ເກີປາວຈີ້ ສາມາດເວົ້າພາສາອັງກິດ ໄດ້ຢ່າງຫຼຽນໄຫຼ ແລະ ຊ່ວຍພໍ່ຕາ ຕ້ອນຮັບນັກທ່ອງທ່ຽວຕ່າງປະເທດ. ທ່ານ ບໍ່ພຽງແຕ່ເປັນ "ຜູ້ນຳທ່ຽວຊົມນົກ" ທີ່ເກັ່ງກ້າສາມາດເທົ່ານັ້ນ, ແຕ່ຍັງໄດ້ຈັດໃຫ້ມີການບໍລິການຕ່າງໆ ເຊັ່ນ: ການສຶກສາຫຼັກສູດທຳມະຊາດ, ການບໍລິການກ່ຽວກັບການຄົ້ນຄວ້າສັດ ແລະ ພືດ, ການຈັດວາງເສັ້ນທາງທ່ອງທ່ຽວຢູ່ພູກ່າວຫຼີກົງຊານ ແລະ ອື່ນໆ ພ້ອມທັງໄດ້ໂຄສະນາເຜີຍແຜ່ທັດສະນະຄະຕິປົກປ້ອງຊີວະນາໆພັນ ໂດຍຜ່ານຮູບການຖ່າຍທຳວິດີໂອສັ້ນ ໃນການເຜີຍແຜ່ຄວາມຮູ້ທົ່ວໄປດ້ານວິທະຍາສາດ.



## ຄົນທີ່ຮູ້ "ພາສານົກ"

ໃນຕອນເຊົ້າ, ທ່ານ ສຽວລີຮວາ ທີ່ຖືກຄົນທັງຫຼາຍເອີ້ນວ່າ: "ອ້າຍນົກ" ໄດ້ມຸ່ງໜ້າເຂົ້າປ່າ, ເລີ່ມປະຕິບັດວຽກງານປະຈຳວັນຂອງຕົນ ກໍຄືການຖ່າຍພາບນົກ.

ຢູ່ເຂດປ່າຕຶບດົງໜາ, ທ່ານ ສຽວລີຮວາ ໄດ້ເອົານິ້ວມືຈຸປາກແລ້ວຜັນເປັນສຽງນົກຮ້ອງ, ບໍ່ດົນ, ນົກນ້ອຍສີນ້ຳຕານມີແຕ້ມສີຂາວໂຕໜຶ່ງ ກໍໄດ້ເຕັ້ນອອກມາ, ເຕັ້ນ ແລະ ບິນອ້ອມທ່ານ ສຽວລີຮວາ. ທີ່ຈິງແລ້ວ, ນົກນ້ອຍໂຕນີ້ ແມ່ນນົກເໝີຍແຕ້ມຂາວ, ເປັນນົກປະເພດອ່ອນໄຫວ ແລະ ນົກທີ່ພິເສດຢູ່ຈີນ, ມີຮູບຮ່າງໜ້າຕາ ເປັນຕາໜ້າຮັກຂອງນົກ ຊຶ່ງເປັນການສ້າງບັນຍາກາດ ໃຫ້ຄົນທັງຫຼາຍທີ່ວນຳ.

ທ່ານ ສຽວລີຮວາ ເປັນຊາວບ້ານ ບ້ານຊານຊາເຫີ ເມືອງຢຸ້ຍລີງ ນະຄອນລີຈຽງ ແຂວງຢຸນນານ. ສ່ວນບ້ານຊານຊາເຫີ ຕັ້ງຢູ່ເຂດຈິ່ນຊືສາງ ພູຫຼາວຈຸ່ນຊານ ທີ່ເປັນເຂດໃຈກາງຂອງເຂດແມ່ນ້ຳ 3 ສາຍໄຫຼຕາມທິດດຽວກັນ ທີ່ເປັນມໍລະດົກທຳມະຊາດຂອງໂລກ. ແຫ່ງນີ້ປ່າຕຶບດົງໜາ, ມີສັດ ແລະ ພືດຫຼາກຫຼາຍຊະນິດ, ມີຫຼາຍຊະນິດແມ່ນຫາຍາກ ແລະ ສ່ຽງຈະສູນພັນ.

ປີ 2020, ທ່ານ ສຽວລີຮວາ ໄດ້ຊ່ວຍນັກສຶກສາຊັ້ນປະລິນຍາໂທ ຂອງມະຫາວິທະຍາໄລ ຂະແໜງການປ່າໄມ້ ພາກຕາເວັນຕົກສ່ຽງໃຕ້ຂອງຈີນ ພົບເຫັນນົກເໝີຍແຕ້ມຂາວທີ່ຫາຍາກຢູ່ເຂດໃກ້ບ້ານຕົນ ຊຶ່ງເຮັດໃຫ້ທ່ານ ເກີດມີຄວາມສົນໃຈຫຼາຍຕໍ່ນົກ. ພາຍໃຕ້ການສະໜັບສະໜູນຂອງພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ຊ່ຽວຊານຊົມນົກ, ທ່ານ ສຽວລີຮວາ ໄດ້ສ້າງຕັ້ງຈຸດຕິດຕາມຊົມນົກ ຢູ່ພູຫຼາວຈຸ່ນຊານ ເພື່ອເປັນສະຖານທີ່ຖ່າຍພາບນົກທີ່ດີໃຫ້ແກ່ນັກກ້ອງຜູ້ມັກຊົມນົກ.

ໂດຍຜ່ານການຝຶກຝົນເປັນໄລຍະເວລາດົນນານ, ທ່ານ ສຽວລີຮວາ ສາມາດຝຶກຮ້ອງສຽງນົກໄດ້ 9 ປະເພດ ເພື່ອດຶງດູດນົກບິນໃກ້ເຂົ້າມາ. ທ່ານໄດ້ຍຶດໝັ້ນຫຼັກການ "ຖ່າຍພາບແບບທຳມະຊາດ" ເພື່ອນຳພານັກກ້ອງຖ່າຍພາບນົກແບບບໍ່ໄດ້ລົບກວນນົກ, ໃນຂະນະດຽວກັນ, ທ່ານ ກໍໄດ້ ສະກັດກັ້ນການປະພຶດທີ່ບໍ່ດີຂອງນັກກ້ອງຢ່າງເຂັ້ມງວດ ເພື່ອປ້ອງກັນບໍ່ໃຫ້ນົກຖືກທຳລາຍ.

ຄວາມພະຍາຍາມຂອງທ່ານ ສຽວລີຮວາ ໄດ້ເຮັດໃຫ້ບ້ານຂອງທ່ານ ກາຍເປັນສະຖານທີ່ສຳຄັນ ສຳລັບການຖ່າຍພາບນົກຫາຍາກຫຼາຍຊະນິດ. ພາຍໃຕ້ການນຳພາຂອງທ່ານ, ນັກທ່ອງທ່ຽວເດີນທາງມາທ່ຽວນັບມື້ນັບຫຼາຍຂຶ້ນ, ຜະລິດຕະພັນກະສິກຳຂອງຊາວບ້ານ ກໍຂາຍດີບຂາຍດີເຊັ່ນດຽວກັນ.



## ຊາວບ້ານທຸກຄົນລ້ວນແຕ່ກາຍເປັນຜູ້ປົກປ້ອງນົກ

ທ່ານ ໄຊ້ອູ ຊາວບ້ານບ້ານສີຖີ່ ເມືອງຢີງຈຽງແຂວງຢຸນນານ ຈີນ ຮູ້ດີຕໍ່ຄວາມຊິນເຄີຍຂອງນົກ 200 ກວ່າຊະນິດ ແລະ ເປັນ "ຜູ້ຊ່ຽວຊານນົກ" ທີ່ມີຊື່ສຽງຂອງທ້ອງຖິ່ນນັ້ນ.

ທ່ານ ໄຊ້ອູ ເລີ່ມເປັນ "ຜູ້ນຳທ່ຽວຊົມນົກ" ແຕ່ປີ 2015. ປີນັ້ນ, ຄະນະຄົ້ນຄວ້າວິທະຍາສາດ ໄດ້ເດີນທາງມາເຖິງບ້ານສີຖີ່, ທ່ານ ໄຊ້ອູ ໄດ້ນຳພາຄະນະທ່ຽວຊົມນົກ ເພື່ອແນະນຳນົກຊະນິດຕ່າງໆຂອງທ້ອງຖິ່ນ. ປະສົບການດັ່ງກ່າວ, ເຮັດໃຫ້ທ່ານ ໄຊ້ອູ ຮູ້ສຶກວ່າ: ການອະນຸລັກສິ່ງແວດລ້ອມນິເວດ ຈະສ້າງຄວາມຮັ່ງມີ ໃຫ້ແກ່ຊາວບ້ານ.

ໃນຂະນະດຽວກັນ, ເມືອງຢີງຈຽງ ເລີ່ມປະຕິບັດມາດຕະການຕ່າງໆ ເພື່ອພັດທະນາການທ່ອງທ່ຽວຊົມນົກ ແລະ ທ່ານ ໄຊ້ອູ ກໍໄດ້ກຳໂອກາດດັ່ງກ່າວ ເພື່ອເປັນ "ຜູ້ນຳທ່ຽວຊົມນົກ", ນຳພາຊ່າງຖ່າຍຮູບ ແລະ ຜູ້ມັກຊົມນົກ ໄປຕິດຕາມຊົມ ແລະ ຖ່າຍພາບນົກ ພ້ອມທັງອະທິບາຍຄວາມຮູ້ກ່ຽວກັບນົກໄປພ້ອມ. ປີທຳອິດ, ທ່ານ ໄຊ້ອູ ສ້າງລາຍຮັບໄດ້ເຖິງ 30.000 ຢວນ, ທ່ານ ກໍໄດ້ຖອດຖອນບົດຮຽນຂອງຕົນ ໃຫ້ແກ່ຊາວບ້ານທັງຫຼາຍ ແລະ ນຳພາຊາວບ້ານເປັນ "ຜູ້ນຳທ່ຽວຊົມນົກ" ເຊັ່ນດຽວກັນ.

ຄຽງຄູ່ກັບການພັດທະນາການທ່ອງທ່ຽວຊົມນົກ, ຊາວບ້ານທັງຫຼາຍ ກໍມີຄວາມຮັບຜິດຊອບ ໃນການອະນຸລັກສິ່ງແວດລ້ອມນິເວດ ແລະ ປັບປຸງສະພາບແວດລ້ອມຂອງບ້ານໃຫ້ດີຂຶ້ນ.

ບ້ານສີຖີ່ ໄດ້ສ້າງຕັ້ງຈຸດຕິດຕາມຊົມນົກຫຼາຍແຫ່ງ, ຊາວບ້ານຫຼາຍສິບຄົນ ໄດ້ກາຍເປັນ "ຜູ້ນຳທ່ຽວຊົມນົກ", ຫຼາຍຄອບຄົວໄດ້ເປີດຣີສອດ ເພື່ອຮັບໃຊ້ໃນການບໍລິການທ່ອງທ່ຽວແບບທຳມະຊາດ. ພູຂອງບ້ານສີຖີ່ ມີຄວາມຂຽວງາມກວ່າເກົ່າ, ຊະນິດນົກກໍມີຫຼາຍກວ່າເກົ່າ ແລະ ນັກທ່ອງທ່ຽວທີ່ເຂົ້າມາທ່ຽວບ້ານສີຖີ່ ກໍນັບມື້ນັບຫຼາຍຂຶ້ນ.

ແຫຼ່ງຂ່າວ: ສຳນັກຂ່າວສານຈີນ, ໜັງສືພິມລາຍວັນລີ້ຈຽງເປັນຕົ້ນ; ພາບໂດຍ: ສຳນັກຂ່າວສານຊິນຮວາ, ໜັງສືພິມລາຍວັນຢຸນນານ ແລະ ອື່ນໆ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com



**ເນື້ອໃນເພີ່ມເຕີມ:**

ແຂວງຢຸນນານ ມີນົກຫຼາຍກວ່າ 1.000 ຊະນິດ ຊຶ່ງໄດ້ກວມປະມານ 9% ຂອງລວມຍອດຊະນິດນົກຂອງໂລກ. ນອກນີ້, ແຂວງຢຸນນານ ກໍແມ່ນໜຶ່ງໃນຕົ້ນກຳເນີດ ແລະ ສູນຂະຫຍາຍພັນຂອງນົກ; ໃນຂະນະດຽວກັນ, ແຂວງຢຸນນານ ຍັງແມ່ນຊ່ອງທາງທີ່ສຳຄັນສຳລັບນົກອົບພະຍົບ ແລະ ມີສະຖານທີ່ອົບພະຍົບທີ່ສຳຄັນ 40 ກວ່າແຫ່ງ ສຳລັບນົກອົບພະຍົບ.

ແຫຼ່ງຂ່າວ: ໜັງສືພິມຄ່ຳເມືອງລະດູບານໃໝ່